**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 4545 /ຮສສ

ນະຄອນຫຼວງວຽງຈັນ, ວັນທີ 10/12/18

# ຂໍ້ຕົກລົງ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມສັງຄົມສົງເຄາະ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມສະບັບເລກທີ 200/ນຍ, ລົງວັນທີ 30 ມິຖຸນາ 2017;
- ອີງຕາມການສະເໜີຂອງກົມສັງຄົມສົງເຄາະ ແລະ ການຄົ້ນຄວ້າຂອງກົມຈັດຕັ້ງ ແລະ ພະນັກງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

**ລັດຖະມົນຕີ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກຂອງກົມສັງຄົມສົງເຄາະ ເພື່ອຮັບປະກັນການເຄື່ອນໄຫວວຽກງານກົມສັງຄົມສົງເຄາະ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກົມສັງຄົມສົງເຄາະ ຂຽນດ້ວຍຕົວອັກສອນຫຍໍ້ວ່າ “ ສສຄ ” ແມ່ນການຈັດຕັ້ງໜຶ່ງສັງກັດໃນໂຄງປະກອບກົງຈັກຂອງກະຊວງແຮງງານ ແລະສະຫວັດດີການສັງຄົມ, ມີພາລະບົດບາດເປັນເສນາທິການ ໃຫ້ຄະນະນຳກະຊວງໃນວຽກງານສົງເຄາະ ແລະ ພັດທະນາ, ປ້ອງກັນ ແລະ ຫຼຸດຜ່ອນຄວາມສ່ຽງໄພພິບັດ, ກຽມຄວາມພ້ອມ ແລະ ຕອບໂຕ້ໄພພິບັດ, ປົກປ້ອງ ແລະ ຊ່ວຍເຫຼືອເດັກ, ຊ່ວຍເຫຼືອຜູ້ດ້ອຍໂອກາດ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ປະຕິບັດ ກົດໝາຍ ແລະ ລະບຽບການຕ່າງໆ ກ່ຽວກັບວຽກງານສັງຄົມສົງເຄາະ, ປົກປ້ອງ-ຊ່ວຍເຫຼືອເດັກ ຜູ້ດ້ອຍໂອກາດ ແລະ ຄຸ້ມຄອງໄພພິບັດ;
2. ຄົ້ນຄວ້າ, ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດມາເປັນແຜນການ, ແຜນງານ, ໂຄງການລະອຽດ ແລະ ແຜນງົບປະມານ ໃນສະເພາະໜ້າ ແລະ ຍາວນານ;